ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
ສຳນັກງານຕັ້ງຢູ່ ໂຮງແຮມວຽງຈັນ ພລາຊາ ຊັ້ນ 6
ຖະໜົນ ສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ,
ນະຄອນຫຼວງວຽງຈັນ ສປປ ລາວ.
ໂທລະສັບ: +856 (21) 265 394,
ແຟັກ: +856 (21) 265394

ເລກທີ 448 /ພກພ
ນະຄອນຫຼວງວຽງຈັນ,ວັນທີ: 07 FEB 2018

ບົດບັນທຶກກອງປະຊຸມສະພາບໍລິຫານ ຄັ້ງທີ I/2018

Meeting minute of BOD I/2018

ກອງປະຊຸມສະພາບໍລິຫານບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນໄດ້ຈັດຂຶ້ນໃນວັນທີ 7 ກຸມພາ 2018 ເວລາ 10:00 ໂມງ ທີ່ໂຮງແຮມ ວຽງຈັນພລາຊາ, ຊັ້ນ 6, ຖະໜົນ ສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ພາຍໃຕ້ການເປັນປະທານຂອງ ທ່ານ ສີທອງ ພົມມະຈິດ ເຊິ່ງມີສະມາຊິກສະພາບໍລິຫານ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ

The PCD Board of Directors Meeting was held on 7 Feb 2018 at 10:00 am, 6th floor, Vientiane Plaza Hotel, Saylom Road, Hatsady Village, Chanthaboury District, Vientiane Capital, Lao PDR, chaired by Mr. Sithong Phommachith together with board members and relevant parties

<u>ວາລະທີ 1:</u> <u>ພິຈາລະນາ ແລະ ປັບປຸງໂຄງຮ່າງການຈັດຕັ້ງຂອງຄະນະອຳນວຍການ</u>

<u>Agenda 1</u>: <u>Consideration and restructuring board of management</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຊາບວ່າ ທ່ານ ນາງ ພິໄລພອນ ວົງປະເສີດ ໄດ້ລາອອກຈາກການເປັນຜູ້ອຳນວຍການໃຫຍ່ ແລະ ສະມາຊິກສະພາບໍລິຫານຂອງບໍລິສັດຕາມໃບສະເໜີຂອງຜູ້ກ່ຽວລົງວັນທີ 1 ທັນວາ 2017 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 28 ກຸມພາ 2018 ເປັນຕົ້ນໄປ;

ກອງປະຊຸມໄດ້ນຳສະເໜີ ແລະ ພິຈາລະນາ ທ່ານ ສີທາ ພົມມະຈິດ ເປັນຜູ້ອຳນວຍການໃຫຍ່ ແທນຜູ້ເກົ່າ ເຊິ່ງເປັນຜູ້ທີ່ມີປະສົບການໃນທຸລະກິດຮັບເໝົາກໍ່ສ້າງມາຫຼາຍປີ;

The chairman notified that Ms Philaiphone Vongpraseuth who acted as CEO and BOD member has resignation of the current CEO and BOD the board, dated of proposing letter on 1 December 2017 and will be effectiveness on 28 February 2018;

The BOD meeting to consider and appoint Mr Sitha Phommachith who has knowledge and skill on business management including experiences in construction for many years to act as the new CEO replaced the former;

<u>ມະຕິ (Meeting resolution)</u>:

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວແລ້ວ ກອງປະຊຸມໄດ້ມີມະຕິເປັນເອກະພາບກັນດັ່ງນີ້:

After the discussion and consideration of the above topic, the BOD agreed as following:

1) ເຫັນດີຮັບຮອງຕາມການສະເໜີລາອອກຂອງ ທ່ານ ນາງ ວິໄລພອນ ວົງປະເສີດ ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 28 ກຸມພາ 2018 ເປັນຕົ້ນໄປ;

   Approved the resignation request of Ms. Philaiphone Vongpraseuth from the CEO and BOD position that will be effectiveness on 28 February 2018;
2) ເຫັນດີຮັບຮອງແຕ່ງຕັ້ງ ທ່ານ ສີທາ ພົມມະຈິດ ເປັນຜູ້ອຳນວຍການໃຫຍ່ຄົນໃໝ່ໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງຜູ້ອຳນວຍການໃຫຍ່ຜູ້ເກົ່າ. ຫຼັງຈາກນີ້ຈະນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.

   Agreed to appoint Mr. Sitha Phommachith as the new CEO which serves the remaining period of the previous CEO. The AGM will be approve after the resolution of this meeting;

<u>ວາລະທີ 2</u>: <u>ພິຈາລະນາ ແລະ ປັບປຸງໂຄງຮ່າງການຈັດຕັ້ງຂອງສະມາຊິກສະພາບໍລິຫານ</u>

<u>Agenda 2</u>: <u>Consideration and restructuring board of management</u>

ກອງປະຊຸມໄດ້ນຳສະເໜີ ແລະ ພິຈາລະນາ ທ່ານ ຜູ ຊິ ອ້ວນລະມະນີ ເຂົ້າເປັນສະມາຊິກສະພາບໍລິຫານຄົນທີ 5 ແທນຜູ້ເກົ່າທີ່ໄດ້ລາອອກໄປເຊິ່ງຜູ້ກ່ຽວກໍມີຄວາມຮູ້ຄວາມສາມາດ, ສ່ວນປະຫວັດ ແລະ ເອກກະສານທີ່ກ່ຽວຂ້ອງຂອງຜູ້ກ່ຽວແມ່ນໄດ້ແຈກຢາຍໃຫ້ແກ່ຜູ້ອຳນວຍການທຸກທ່ານກ່ອນເລີ່ມການປະຊຸມ ແລະ ຈະນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງພາຍຫຼັງທີ່ມີມະຕິຈາກກອງປະຊຸມຄັ້ງນີ້.

ໂຍທາທິການ
ບໍລິສັດ
ງ ແລະ ພັດ
ມະຫາຊົນ
usy Construction
evelopment Pu
Company
ຫຼວ

The BOD meeting to consider and propose Mr. Phoukhong Ouanlamany to be the 5th BOD member who is knowledgeable and capable. The CV and relevant documents were distributed to the members prior to the BOD meeting commencement and the up comming AGM will approve this resolution.

<u>ມະຕິ (Meeting resolution)</u>:

ກອງປະຊຸມເຫັນດີເປັນເອກະພາບຮັບຮອງເອົາທ່ານ ພູຂົງ ອ້ວນລະມະນີ ເປັນສະມາຊິກສະພາບໍລິຫານ ແລະ ຫຼັງຈາກນີ້ຈະນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;

Agreed to appoint Mr. Phoukhong Ouanlamany to act as the BOD member and the up coming AGM will be approve this resolution;

ກອງປະຊຸມບໍ່ມີບັນຫາເພີ່ມເຕີມທີ່ຈະພິຈາລະນາ, ທ່ານປະທານກອງປະຊຸມໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງການ ໃນເວລາ 11:30 ໂມງ ຂອງວັນດຽວກັນ.

The meeting has no other business, the Chairman declared the closing of the meeting officially at 11:30 am on the same day.

ປະທານກອງປະຊຸມ

Chairperson

ສີທອງ ພິມມະຈິດ

ຜູ້ບັນທຶກກອງປະຊຸມ

Minutes taker

ຄອນສະຫວັນ ທຳວົງສິດ